www.xtrapapers.com

M12/1/A1LAO/SP1/LAO/TZ0/XX

22120567

International Baccalaureate®
Baccalauréat International
Bachillerato Internacional

**LAO A1 – STANDARD LEVEL – PAPER 1**
**LAO A1 – NIVEAU MOYEN – ÉPREUVE 1**
**LAOSIANO A1 – NIVEL MEDIO – PRUEBA 1**

Thursday 10 May 2012 (morning)
Jeudi 10 mai 2012 (matin)
Jueves 10 de mayo de 2012 (mañana)

1 hour 30 minutes / 1 heure 30 minutes / 1 hora 30 minutos

INSTRUCTIONS TO CANDIDATES

- Do not open this examination paper until instructed to do so.
- Write a commentary on one passage only. It is not compulsory for you to respond directly to the guiding questions provided. However, you may use them if you wish.
- The maximum mark for this examination paper is *[25 marks]*.

INSTRUCTIONS DESTINÉES AUX CANDIDATS

- N'ouvrez pas cette épreuve avant d'y être autorisé(e).
- Rédigez un commentaire sur un seul des passages. Le commentaire ne doit pas nécessairement répondre aux questions d'orientation fournies. Vous pouvez toutefois les utiliser si vous le désirez.
- Le nombre maximum de points pour cette épreuve d'examen est *[25 points]*.

INSTRUCCIONES PARA LOS ALUMNOS

- No abra esta prueba hasta que se lo autoricen.
- Escriba un comentario sobre un solo fragmento. No es obligatorio responder directamente a las preguntas que se ofrecen a modo de guía. Sin embargo, puede usarlas si lo desea.
- La puntuación máxima para esta prueba de examen es *[25 puntos]*.


© International Baccalaureate Organization 2012

www.xtrapapers.com



*ໃຫ້ເຈົ້າວິຈານ**ໜຶ່ງເລື່ອງ**ທີ່ເຈົ້າເລືອກຈາກສອງເລື່ອງຕໍ່ໄປນີ້*

**1.**

ແຕ່ເຂົ້າເຮືອນປັບສຽງແປກປະຫລາດ ມັນກໍບໍ່ເຄີຍເກີດຂື້ນກັບເມັຍສຸດແສນຮັກຂອງຂ້ອຍຈັກເທື່ອ ນາງນັ່ງຮ້ອງໄຫ້ນ້ຳຕາໄຫລຊື້ມູກຍ້ອຍ … ນາງເວົ້າວ່າ

“ເຈົ້ານັ້ນບ້າ! ບ້າແທ້ໆ! ເຈົ້າບໍ່ມີວຽກບໍ? ດຽວນີ້ຄຳເວົ້າຂອງຊາວບ້ານແລ່ນເຂົ້າຫູຂ້ອຍ ຈົນລົ້ນແລ້ວ ຖ້າມີກະຕ່າໃສ່ບໍ່ຮູ້ວ່າຊິໄດ້ຈັກກະຕ່າແລ້ວເຈົ້າຮູ້ບໍ່ ເຂົາເວົ້າວ່າເຈົ້ານັ້ນບ້າ!” …

“ຂ້ອຍບ້າອີຫລີບໍ່?”

ກະຂອງວ່ານີ້ແຫລະ ມີຫລາຍເທື່ອຂ້ອຍຍ່າງໄປຕາມຖະໜົນ. ຂ້ອຍມັກເອົາຖົງຢາງຂະໜາດໃຫຍ່ມາພາຍໃສ່ບ່າຍ່າງເລາະໄປເລາະມາ ຂ້ອຍມັກເກັບເອົາເສດເຈ້ຍແລະຖົງປາລາະສະຕິກທີ່ເຮ່ຍຢູ່ຕາມຂອບຖະໜົນຢັດໃສ່ຖົງໃຫຍ່ຈົນເຕັມ. ເມື່ອເຕັມແລ້ວກໍເອົາໄປຖອກ ໃສ່ຖັງຂີ້ເຫຍື້ອທີ່ເພິ່ນເຮັດຕາມແຄມຖະໜົນ …

“ເຈົ້ານັ້ນບ້າແທ້ໆ!” …

ຂ້ອຍກໍຕ້ອງໄດ້ປ່ຽນແປງເພາະຄົນບ້າຄືຂ້ອຍກໍບໍ່ຕ້ອງການໃຫ້ຄອບຄົວຕ້ອງມາແຍກກັນ ເພາະເລື້ອງນີ້… ມື້ນີ້ຂ້ອຍອອກຈາກເຮືອນບໍ່ຄືກັນກັບຄັ້ງກ່ອນໆອີກ ຂ້ອຍບໍ່ນຸ່ງເຄື່ອງຕຸ່ມຍຸ່ມ ຕ່າມຍ່າມອີກ ຂ້ອຍບໍ່ພາຍຖົງຢາງໃຫຍ່ແລະບໍ່ເກັບຂອງເສດຕາມຂອບຖະໜົນແລະບອນອື່ນໆ ຂ້ອຍນຸ່ງເຄື່ອງຂ້ອນຂ້າງດີຂີ່ລົດຖີບຜ່ານໄປແຕ່ລະບ່ອນ … ໃນທີ່ສຸດຂ້ອຍກໍມາຢຸດຢູ່ຮ້ານກາເຟ

ຂ້ອຍນັ່ງກິນໂອລ່ຽງຄືກັບຄົນອື່ນໆແລະສັງເກດໄປຮອບໆໃນຂະນະດຽວກັນມີສາຍລົມພັດຜ່ານມາຂ້ອນຂ້າງແຮງສົມຄວນ ຖົງຢາງປີວມາແຕ່ທາງໃດກໍບໍ່ມີໃຜຮູ້ເປີໃສ່ໜ້າຜູ້ຊາຍໄວກາງຄົນທີ່ນັ່ງຢູ່ທາງຊ້າຍສວຍກັບຂ້ອຍບໍ່ຍຸຕິທຳ ປານໃດດອກທີ່ຖົງຢາງຈະປີວມາເປີໜ້າຊາຍ ຄົນນັ້ນແຕ່ຈະເຮັດແນວໃດເມື່ອຖົງຢາງບໍ່ມີວິນຍານ ຊາຍຄົນນັ້ນປັດຖົງຢາງອອກທັງເວົ້າ ທັງຈົ່ມ

“ຮ່າກິນຫົວມຶງເຮີຍ! ຖົງຢາງນໍຖົງຢາງ” …

ຂ້ອຍນັ່ງຟັງແຂກຜູ້ມາໃຊ້ບໍລິການສົນທະນາກັບເຈົ້າຂອງຮ້ານຈົນໝົດໂອລ່ຽງໜຶ່ງຈອກ ແລ້ວຂ້ອຍສັ່ງໃໝ່

“ເມື່ອວານຊືນນີ້ເຂົາກໍວ່າງົວລຸງດີຕາຍຍ້ອນຖົງຢາງ”

“ອາວ! ເປັນຫຍັງວ່າຕາຍຍ້ອນຖົງຢາງ”

“ອາວ ບໍ່ຕາຍຍ້ອນຖົງຢາງຊິຕາຍຍ້ອນຫຍັງ? ປາດທ້ອງອອກມາມີຖົງຢາງສອງ ສາມຖົງພຸ້ນນ່າ”

“ກໍຂອງວ່າແລ້ວ ເຂົາເຮັດຖັງໃຫ້ໃສ່ກໍບໍ່ໃສ່ຖິ້ມໄປທົ່ວທີບ”

“ແຕ່ຫວ່າງສິບມື້ກ່ອນໄຂແດ່ເພາະມີຄົນບ້າຜູ້ໜຶ່ງມາເລາະເກັບໄປຖິ້ມໃສ່ຖັງຂີ້ເຫຍື້ອ” ເຈົ້າຂອງຮ້ານເວົ້າ

“ດຽວນີ້ມັນໄປໃສບຸບໍ່ເຫັນມາ”

“ຫລືວ່າມັນເຊົາບ້າແລ້ວບໍ່ຈັກ!” ເຈົ້າຂອງຮ້ານເວົ້າ

ຂ້ອຍຖອນຫັນໃຈບາດຍາວໆແລ້ວດື່ມໂອລ່ຽງເອືອກສຸດທ້າຍ, ລຸກຂຶ້ນຍ່າງໄປຫາລົດຖີບທັງນຶກໃຈວ່າບໍ່ມື້ໃດກໍມື້ໜຶ່ງຂ້ອຍອາດກັບໄປເປັນຄົນບ້າອີກ

ແສງພູໄຊອິນທະວິຄຳ
ເມື່ອຂ້ອຍເຊົາບ້າ ໃນ *ໂຮມເລື່ອງສັ້ນວັນນະກຳຮ່ວມສະໄໝ*
ວຽງຈັນ: ວາລະສານວັນນະສິນ 2003

www.xtrapapers.com



– ຜູ້ຂຽນໃຊ້ຄວາມບ້າເພື່ອສະທ້ອນໃຫ້ເຫັນອີຫຍັງ

– ຜູ້ຂຽນເຮັດແນວໃດເພື່ອຈະດຶງດູດຄວາມສົນໃຈຂອງຜູ້ອ່ານ

– ໃຫ້ເຈົ້າວິຈານການໃຊ້ເລື່ອງຕລົກຂອງຜູ້ຂຽນ ເພິ່ນເຮັດແນວໃດໃຫ້ມັນຕລົກ ແລະເຮັດເພື່ອອີຫຍັງ

www.xtrapapers.com



**2.**

## ສົ້ມທີ່ຄືດ

ໂອນໍ ສານນີ້ຊື່ວ່າ ສົ້ມທີ່ຄືດຄວນຄ່າລ້ານ
ມະນີສີດວງປະເສີດ ຈັກຂອດໂຮງຕ່ອນຕື້
ຖະໜອມແກ້ວຄ່າເມືອງ ...
ຮຽມປາກວານຟູງພີ້ນອງ ວົງວານໃຫ້ມາຊ່ວຍ ຊີຄືຫລີ ...
ເຊີນແມ່ມາຜັດສີແກ້ວ ທັມມະໂຮງໃຫ້ແຈ້ງຮຸ້ງ ແດ່ທ້ອນ ...
ແກ້ວກໍຍັງຕ່າງແກ້ວ ລືຄ່າແສນຄໍາ
ບໍ່ໃຊ່ແນວສາຍຜີງ ແຮ່ຊະຄອນແຄມນໍ້າ
ຫາກບໍ່ໂສດາດ້ວຍທັມມະໂຮງກໍຕາມໂອກເສັຍທ້ອນ (ໂສດາ ຄື ສົນໃຈ ຕາມໂອກ ຄື ຕາມໃຈ)
ຫີນແຮ່ ເຈົ້າຫາກກຸມວ່າແກ້ວ ຕາມໃຈເຈົ້າຊິເບິ່ງເອົາ ຫັ້ນຖ້ອນ ...
ທາງຫາກມີຫລາຍເສັ້ນ ຕາມໃຈຊິເລືອກໄຕ່ ໄປຖ້ອນ
ມັກເສັ້ນເວີ້ງ ທາງລ້ຽວກໍຫາກມີ
ໝູຫາກໝາງເໝັ້ນຢ້າວ ຊິລົງນອນເກືອກຂີ້ຝຸ່ນ ກໍຕາມຖ້ອນ (ໝາງເໝັ້ນ ຄື ເບື່ອໜ່າຍ)
ແນວບັກຄໍາຫາກຈະຮູ້ເຍື່ອງຂໍ້ ເຫັນແຈ້ງຊິຄ່ອຍຟັງ (ຮູ້ເຍື່ອງຂໍ້ ຄື ຮູ້ເລື້ອງ)
ວ່າບໍ່ໂສດາດ້ວຍ ປູປາຊີ້ນຕ່ອນ ກໍດີຖ້ອນ
ອຶດພໍເຍື້ອນຢູ່ຢ້າວ ພໍໄດ້ໂຜດແນວ ແດ່ແມ (ອຶດພໍເຍື້ອນ ຄື ອຶດທົນ)
ໝູບໍ່ມັກຢູ່ຢ້າວ ໝາງໂບກທາງຟາແທ້ນໍ
ສັງບໍ່ບິນບົນເຫາະ ຢູ່ເທິງສະໜີແຮ້ງ
ໝູຫາກໝາງເໝັ້ນເຊົ້າ ແນວຊິໝາແໜງຈົ່ມ ເປັນລີ
ແນວວ່າຢາກປັ້ນໝ່ຽງເຂົ້າ ຂີ້ນຊໍ້າສິ່ງຄຸນ ເຈົ້າເດ ...
ວ່າຊິກິນຮາກໄມ້ຕາງເຂົ້າ ກໍຊ່າງໃຈເຈົ້າທ້ອນ
ໃຜບໍ່ຈໍາໃຈເຈົ້າ ກິນສານຂນອງເບື່ອ ເມົານາ ...
ເຖິງເມື່ອເດືອນຈຽງຄ້ອຍ ໜາວມາບໍ່ຮູ້ເມື່ອ ຄີງນໍ
ຈາຣິດ ເດືອນຈຽງຂື້ນ ໜາວລົມຄ້ອຍຄັ່ງ
ປີນີ້ ເດືອນຫ້າ ສັງຊິມາແລ່ນຂໍ້ ໜາວຄ້ອຍຄັງທວງ ພີ່ເດ ...
ມີທໍ່ໂສກາກັ້ນ ດຽວດາຍທົນທະເວດ
ເຈັບໄຂ້ ຄີງບໍ່ຮ້ອນ ໃຜຊິຮູ້ຮ່ອມປົວເຈົ້າເດ

ສົ້ມທີ່ຄືດໃນລືປພະສູນ
ໜັງສືໃບລານບໍ່ຮູ້ປີແຕ່ງ

– ໃຫ້ເຈົ້າວິຈານການໃຊ້ສັນຍະລັກໃນເລື່ອງນີ້

– ຜູ້ຂຽນຕ້ອງການສື່ອີຫຍັງແດ່ໃຫ້ຜູ້ອ່ານ

– ຜູ້ຂຽນເຮັດແນວໃດເພື່ອຈະຊັກຈູງອາລົມຂອງຜູ້ຂຽນ